# ກອງປະຊຸມໃຫຍ່ຄັ້ງທີ VI ຂອງສະຫະພັນກຳມະບານທະນາຄານແຫ່ງ ສປປລາວ ໄດ້ສຳເລັດລົງດ້ວຍໝາກຜົນອັນຈົບງາມ




**ຂ່າວ - ພາບ : ຣັດສະໝີ ດວງສັດຈະ**

ກອງປະຊຸມໃຫຍ່ຄັ້ງທີ VI ຂອງສະຫະພັນກຳມະບານທະນາຄານແຫ່ງສປປລາວ( ທຫລ )ໄດ້ສຳເລັດລົງດ້ວຍໝາກຜົນອັນງົດງາມເມື່ອວັນທີ 10 ກໍລະກົດຜ່ານມາໂດຍພາຍໃຕ້ການເປັນປະທານຂອງສະຫາຍ ນໍລະດີ ສີລັດຕະນະ ປະທານສະຫະພັນກຳມະບານ ທຫລ ແລະ ໂດຍການເປັນກຽດເຂົ້າຮ່ວມຂອງສະຫາຍ ວົງເພັດ ໄຊເກີຢາຈົງຕົວ ກຳມະການສູນກາງພັກ,ປະທານສູນກາງສະຫະພັນກຳມະບານລາວ,ສະຫາຍບຸນສົງ ສົມມາລາວົງ ຮອງເລຂາຄະນະພັກ,ຮອງຜູ້ວ່າການ ທຫລ,ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ ທຫລ,ນອກນີ້ກໍມີບັນດາຄະນະພັກ ທຫລ, ບັນດາຄະນະອຳນວຍການ,ບັນດາຄະນະກົມ ແລະ ພະນັກງານ-ຜູ້ແທນກຳມະບານຈາກບັນດາທະນາຄານຂອງລັດ ແລະ ລັດຮຸ້ນສ່ວນເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມດັ່ງກ່າວ,ສະຫາຍປະທານກຳມະບານ ທຫລ ກໍໄດ້ຢືນຢັນເຖິງໝາກຜົນແຫ່ງການເຄື່ອນໄຫວວຽກງານກຳມະບານໃນຕະຫຼອດໄລຍະເວລາ 5 ປີ ຜ່ານມາເຊິ່ງສາມາດຍາດໄດ້ບັນດາຜົນງານ ແລະ ໄຊຊະນະອັນໃຫຍ່ຫຼວງໃນຫຼາຍດ້ານເປັນການປະກອບສ່ວນເຂົ້າໃນການພັດທະນາລະບົບທະນາຄານຂອງລາວໃຫ້ກ້າວໜ້າ ແລະ ທັນສູ່ຄວາມທັນສະໄໝເປັນກ້າວໆ,ອັນພົ້ນເດັ່ນກໍແມ່ນວຽກງານສ້າງກອງທຶນເຊິ່ງສະຫະພັນກຳມະບານ ທຫລ ໄດ້ມີຍອດເງິນລວມຂອງກອງທຶນ 1.000 ກວ່າລ້ານກີບ,ໃນນີ້ເດັ່ນກວ່າໝູ່ແມ່ນກຳມະບານຮາກຖານທະນາຄານການຄ້າຕ່າງປະເທດມີເງິນກອງທຶນ 1.000 ກວ່າລ້ານກີບ,ຖັດລົງມາກໍແມ່ນກຳມະບານທະນາຄານສົ່ງເສີມກະສິກຳມີເງິນກອງທຶນ 700 ລ້ານກີບ,ນອກນີ້ສະຫະພັນກຳມະບານ ທຫລ ກໍໄດ້ປະກອບສ່ວນຊ່ວຍເຫຼືອ ແລະ ອຸປະຖຳສັງຄົມ,ກຳລັງປະກອບອາວຸດເກືອບ 100 ລ້ານກີບ,ໃນນີ້ລວມທັງການປະກອບສ່ວນຂອງກຳມະບານທະນາຄານການຄ້າຕ່າງປະເທດໃນການກໍ່ສ້າງໂຮງຮຽນປະຖົມໜຶ່ງແຫ່ງຢູ່ເມືອງ ສັງທອງ ນະຄອນຫຼວງວຽງຈັນ.

ນອກຈາກນີ້ກໍສາມາດຍາດໄດ້ຜົນງານອັນພົ້ນເດັ່ນໃນການປະກອບສ່ວນຮັກສາສະຖຽນລະພາບເງິນຕາແຫ່ງຊາດໄວ້ຢ່າງໝັ້ນທ່ຽງ,ໄດ້ຕັ້ງໜ້າປັບປຸງ ແລະ ພັດທະນາການບໍລິການ ແລະ ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ພ້ອມດຽວກັນກໍໄດ້ປັບປຸງນິຕິກຳ,ປັບປຸງບັນຊີສູ່ມາດຕະຖານສາກົນ,ກະກຽມເງື່ອນໄຂຮອບດ້ານໃຫ້ແກ່ການເປີດຕະຫຼາດຫຼັກຊັບໃນມໍ່ໆນີ້ ແລະ ວຽກງານອື່ນໆ ອີກຈຳນວນໜຶ່ງ.

ຜົນງານທີ່ຍາດມາໄດ້ໃນຕະຫຼອດໄລຍະຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ V ຂອງສະຫະພັນກຳມະບານ ທຫລ ນັ້ນ ກ່ອນອື່ນແມ່ນຍ້ອນໄດ້ຮັບການຊີ້ນຳເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ສິດຂອງຄະນະພັກ-ຄະນະນຳທະນາຄານແຫ່ງ ສປປລາວ,ດ້ວຍການເອົາໃຈໃສ່ເຄື່ອນໄຫວຈັດຕັ້ງປະຕິບັດຂອງບັນດາສະຫາຍຄະນະສະຫະພັນກຳມະບານ ທຫລ ເຊິ່ງຍາມໃດກໍໄດ້ຍົກສູງວຽກງານການເມືອງນຳພາແນວຄິດບວກກັບຄວາມບາກບັ່ນພະຍາຍາມ ແລະ ການຕັດສິນໃຈສູງຂອງບັນດາສະມາຊິກກຳມະບານໃນທົ່ວລະບົບທະນາຄານ.

ກອງປະຊຸມຍັງໄດ້ຮັບຮອງເອົາທິດທາງແຜນການເຄື່ອນໄຫວໃນຊຸມປີຕໍ່ໜ້າ ແລະ ໃນເວລາຕໍ່ມາກໍໄດ້ດຳເນີນການປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານສະຫະພັນກຳມະບານ ທຫລ ຄັ້ງທີ VI, ສະຫາຍ ນໍລະດີ ສີລັດຕະນະ ໄດ້ຮັບການເລືອກຕັ້ງເປັນປະທານສະຫະພັນ ກຳມະບານ ທຫລ ອີກເທື່ອໃໝ່, ຈາກນັ້ນ ສະຫາຍປະທານສູນກາງສະຫະພັນກຳມະບານລາວ ກໍໄດ້ໃຫ້ກຽດໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມດັ່ງກ່າວ.